ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ
LAO CEMENT PUBLIC COMPANY

ຖະໜົນ ໜອງບອນ ວຽງຈັນ, ສ. ປ. ປ. ລາວ ຕູ້ ປ.ນ 6821, ໂທຣ: (856-21) 412111, 451116 ແຟັກ: 263120, 451222
NONGBONE RD, VIENTIANE, LAO P.D.R P.O.BOX 6821, TEL: (856-21) 412111, 451116 FAX: 263120, 451222
E-mail: Lcc@laocement.com, www.laocement.com

ບົດລາຍງານ

ສະພາບການດຳເນີນທຸລະກິດການຜະລິດປະຈຳ 6 ເດືອນຕົ້ນປີ ແລະແຜນການວຽກງານປະຈຳ 6 ເດືອນທ້າຍປີ 2018

ຮຽນ : ທ່ານປະທານ, ຮອງປະທານ ແລະບັນດາທ່ານກຳມະການສະພາບໍລິຫານ.

ສະເໜີຂໍລາຍງານສະພາບການດຳເນີນທຸລະກິດການຜະລິດປະຈຳ 6 ເດືອນຕົ້ນປີ ແລະແຜນການວຽກງານ ປະຈຳ 6 ເດືອນ ທ້າຍປີ 2018 ດັ່ງນີ້ :

I. ສະພາບການດຳເນີນທຸລະກິດການຜະລິດປະຈຳ 6 ເດືອນຕົ້ນປີ 2018

ໄລຍະ 6 ເດືອນຕົ້ນປີ 2018 ໄດ້ປະເຊີນກັບຄວາມຫຍຸ້ງຍາກໃນລະດູຝົນ, ຊຶ່ງຕະຫລອດໄລຍະ 6 ເດືອນ ຕົ້ນປີ, ສາມາດຜະລິດຊີມັງໄດ້ທັງໝົດ 108.900 ໂຕນ, ສຳເລັດແຜນການ 49.48%,ສຳເລັດການຈຳໜ່າຍທັງ ໝົດ 107.700ໂຕນ, ສຳເລັດແຜນການ 47.58%, ສ້າງລາຍຮັບໄດ້ທັງໝົດ 3.890.000.000 ກີບ, ເທົ່າກັບ 463.000 ໂດລາ, ກຳໄລກ່ອນອາກອນ 2.389.000.000 ກີບ ເທົ່າກັບ 284.300 ໂດລາ.

ສາມາດເຮັດສຳເລັດວຽກງານໃນ 6 ເດືອນຕົ້ນປີຄື :

1. ການຜະລິດປົກກະຕິ 6 ເດືອນຕົ້ນປີ 2018 ສາມາດຜະລິດກະລິງເກີໄດ້ 102.300 ໂຕນ, ສຳເລັດ ແຜນການ 51.13 % ທຽບໃສ່ປີ 2017 ເພີ່ມຂຶ້ນ 10.41 %, ໂຮງງານສາມາດປະຕິບັດແຜນການ ສ້ອມແປງໃຫ່ຍປະຈຳປີສຳເລັດກ່ອນລະດູຝົນທີ່ຈະມາເຖິງ ເພື່ອຮັບປະກັນການຜະລິດປົກກະຕິ,
2. ການຄວບຄຸມຕົ້ນທຶນ : ຜ່ານການປະຕິບັດມາດຕະການຕ່າງໆ ສາມາດຄວບຄຸມຕົ້ນທຶນຢ່າງມີປະສິດທິ ຜົນ, ທຽບໃສ່ຕົ້ນທຶນປີ 2017 ຫຼຸດລົງ 7.6 %, ຜ່ານການປະຕິຮູບໂຄງການພັດທະນາບໍ່ຫີນປູນສາມາດ ຫຼຸດ ຜ່ອນຕົ້ນທຶນໃນຂອດດັ່ງກ່າວປະມານ 10 %,
3. ຮັບປະກັນການສະໜອງປົກກະຕິ, ປະລິມານຊີມັງທີ່ສົ່ງອອກໂຮງງານເມື່ອທຽບໃສ່ປີຜ່ານມາໃກ້ຄຽງກັນ, ນອກຈາກທີ່ຈະສະໜອງໃຫ້ໂຄງການທາງລົດໄຟແລ້ວ ບໍລິສັດກຳລັງຍາດແຍ່ງການສະໜອງໃຫ້ໂຄງການ ເຂື່ອນໄຟຟ້າທາງພາກເໜືອຈຳນວນໜຶ່ງ.
4. ສຳເລັດວຽກງານເຂົ້າຕະຫຼາດຫຼັກຊັບ ໃນວັນທີ 2/03/2018 ແລະເລີ່ມລົງມືໃນວຽກງານປັບປຸງດ້ານ ເຕັກນິກ ຂອງໂຮງງານ, ພາຍຫລັງທີ່ສຳເລັດວຽກງານການເຂົ້າຕະຫຼາດຫຼັກຊັບແລ້ວກໍ່ໄດ້ຮີບຮ້ອນລົງມື ໃນ

ວຽກງານປັບປຸງດ້ານເຕັກນິກຂອງໂຮງງານ ໂດຍສະເພາະແມ່ນວຽກງານການປັບປຸງລະບົບເຄື່ອງຄວບຄຸມ ມໍເຕີ (Inverter) ຊຶ່ງໄດ້ມີການສັ່ງຊື້ເຄື່ອງຈັກ, ກໍ່ສ້າງພື້ນຖານໂຄງລ່າງຮອດປະຈຸບັນສາເລັດໄດ້ແລ້ວ 80% ແລະຄາດວ່າຈະສາເລັດທັງໝົດໃນເດືອນ 9 ນີ້.

5. ສະພາບເງິນໝຸນວຽນ ແລະໂຄງປະກອບຂອງຊັບສິນເປັນປົກກະຕິດີ : ໃນຕົ້ນປີເງິນກູ້ທະນາຄານຫຼຸດລົງ 100 %, ຄ່າໃຊ້ຈ່າຍການເງິນຫຼຸດລົງ 415.000.000 ກີບ ເທົ່າກັບ 61 %, ອັດຕາຊັບສິນຕໍ່ໜີ້ສິນຫຼຸດລົງ 32.5%,ໄດ້ສຳເລັດການປັນຜົນຂາຮຸ້ນຈຳນວນ 2.520.000.000 ກີບ ເທົ່າກັບ 305.000 ໂດລາ, ຊຶ່ງເປັນການຮັບປະ ກັນຜົນປະໂຫຍດຂອງຂາຮຸ້ນ.
6. ວຽກງານການຄຸ້ມຄອງບໍລິຫານພາຍໃນໄດ້ຮັບການປັບປຸງຢ່າງມີມາດຕະຖານ ຊຶ່ງໃນຕົ້ນປີໄດ້ຮັບການຢັ້ງຢືນລະບົບ ISO 9001:2015, ມີການຝຶກອົບຮົມ ແລະປັບປຸງຂໍ້ກຳນົດ-ກົດລະບຽບຢ່າງຕໍ່ເນື່ອງ,
7. ເອົາໃຈໃສ່ໃນການປະກອບສ່ວນຊ່ວຍເຫຼືອສັງຄົມ ໂດຍການປະສ່ວນສ້ອມແປງເສັ້ນທາງຢູ່ຂອບເຂດບ້ານທີ່ໃກ້ຄຽງ, ໃນເດືອນ 7 ທີ່ຜ່ານມາໄດ້ປະກອບສ່ວນຊ່ວຍເຫຼືອໄພພິບັດທີ່ແຂວງອັດຕະປືຫລາຍກວ່າ 63 ລ້ານກວ່າກີບ.

II. ໜ້າທີ່ວຽກງານທີ່ສຳຄັນໃນໄລຍະທ້າຍປີ 2018

1. ເອົາໃຈໃສ່ຕໍ່ວຽກງານການຈຳໜ່າຍ, ສືບຕໍ່ເອົາໃຈໃສ່ການສະໜອງຊີມັງໃຫ້ໂຄງການກໍ່ສ້າງທາງລົດໄຟ ແລະ ໂຄງການອື່ນໆ ເພື່ອຮັບປະກັນການຈຳໜ່າຍ, ມີກຳນົດນະໂຍບາຍຢ່າງສອດຄ່ອງເພື່ອສຳເລັດແຜນການຈຳໜ່າຍ, ບໍລິການຫລັງການຂາຍ ແລະການເກັບກູ້ໜີ້ສິນຄືນ.
2. ຮັບປະກັນເຄື່ອງຈັກການຜະລິດ, ຍົກສູງຄຸນນະພາບ, ຫຼຸດຜ່ອນຕົ້ນທຶນ
   - ຄວບຄຸມຄຸນນະພາບຖ່ານຫີນ ແລະຕົ້ນທຶນການຈັດຊື້.
   - ຮັບປະກັນອັດຕາການເຮັດວຽກຂອງເຄື່ອງຈັກ, ຄວບຄຸມລະບົບເຕົາ ແລະປະກອບວັດຖຸໄຟຟ້າ ແລະ ມີປະສິດທິພາບ.
   - ເພີ່ມທະວີວຽກງານການພັດທະນາ :
     1) ໂດຍການຜັກດັນວຽກງານໂຄງການຮັບເໝົາບໍ່ຫີນປູນ ໃຫ້ມີການຈຳໜ່າຍສູ່ພາຍນອກ ແລະສ້າງລາຍຮັບ.
     2) ຜັກດັນວຽກງານສຳຫຼວດຖ່ານຫີນໃຫ້ມີຄວາມຄືບໜ້າ ແລະໄປເຖິງວຽກງານການຂຸດຄົ້ນເພື່ອຫຼຸດຜ່ອນຕົ້ນທຶນ.
     3) ຮ່ວມມືກັບໂຮງງານ ຊີມັງອື່ນ ເພື່ອເພີ່ມກຳລັງການຜະລິດ.
     4) ເຮັດວຽກງານດ້ານສະພາບແວດລ້ອມ, ສຸຂະພາບຄວາມປອດໄພ ແລະການປະກອບສ່ວນຊ່ວຍເຫຼືອສັງຄົມໃຫ້ດີ.

ຜູ້ອຳນວຍການ ບໍລິສັດ

ຈ່າງ ລີ